**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ 2815 /ກຊສ

ນະຄອນຫຼວງວຽງຈັນ, ວັນທີ ໒໗ ພຶດສະພາ 2022

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ແຜນງານການບໍລິໂພກ ແລະ ການຜະລິດແບບຍືນຍົງ ຂອງ ສປປ ລາວ 2022-2025, ວິໄສທັດ ຮອດປີ 2030

- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 573/ນຍ, ລົງວັນທີ 20 ກັນຍາ 2021;
- ອີງຕາມ ແຈ້ງການ ຂອງ ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 1231/ກຜທ.ຮມສ-ຈສກ.08, ລົງວັນທີ 06 ສິງຫາ 2020;
- ອີງຕາມ ບົດລາຍງານຈາກ ກົມແຜນການ ແລະ ການເງິນ ສະບັບເລກທີ 1807/ກຊສ.ກຜງ, ລົງວັນທີ 18 ມີນາ 2022;
- ອີງຕາມ ການເຫັນດີເປັນເອກະພາບຂອງ ຄະນະນຳ ກຊສ ຄັ້ງວັນທີ 17 ພຶດສະພາ 2022.

## ລັດຖະມົນຕີ ຕົກລົງ:

**ມາດຕາ 1:** ເຫັນດີຮັບຮອງເອົາ ແຜນງານການບໍລິໂພກ ແລະ ການຜະລິດແບບຍືນຍົງຂອງ ສປປ ລາວ 2022-2025, ວິໄສທັດ ຮອດປີ 2030;

**ມາດຕາ 2:** ມອບໃຫ້ ກົມແຜນການ ແລະ ການເງິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ພ້ອມທັງຊຸກຍູ້ການຈັດຕັ້ງປະຕິບັດ ແລະ ຕິດຕາມປະເມີນຜົນ ແຜນງານການບໍລິໂພກ ແລະ ການຜະລິດແບບຍືນຍົງຂອງ ສປປ ລາວ 2022-2025, ວິໄສທັດ ຮອດປີ 2030;

**ມາດຕາ 3:** ຫ້ອງການ, ບັນດາກົມ, ກອງ, ສະຖາບັນ ອ້ອມຂ້າງ ກຊສ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງ ແລະ ນະຄອນຫຼວງ, ຫ້ອງການ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ລັດຖະມົນຕີ

ນ.ບຸນຄຳ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ເລກທີ 2816/ກຊສ

ນະຄອນຫຼວງວຽງຈັນ, ວັນທີ ໒໗ ພຶດສະພາ 2022

# ແຜນງານການບໍລິໂພກ ແລະ ການຜະລິດແບບຍືນຍົງ ຂອງ ສປປ ລາວ 2022-2025, ວິໄສທັດ ຮອດປີ 2030

- ອີງຕາມ ດໍາລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 573/ນຍ, ລົງວັນທີ 20 ກັນຍາ 2021;
- ອີງຕາມ ແຈ້ງການ ຂອງ ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 1231/ກຜທ.ຮມສ-ຈສກ.08, ລົງວັນທີ 06 ສິງຫາ 2020;
- ອີງຕາມ ບົດລາຍງານຈາກ ກົມແຜນການ ແລະ ການເງິນ ສະບັບເລກທີ 1807/ກຊສ.ກຜງ, ລົງວັນທີ 18 ມີນາ 2022.

## I. ຄວາມເປັນມາ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຮອດປີ 2030 ໄດ້ລະບຸຈະແຈ້ງດ້ານນະໂຍບາຍໃນການຫັນປ່ຽນຮູບແບບການພັດທະນາຂອງ ສປປ ລາວ ໃຫ້ເປັນໄປຕາມທິດສີຂຽວ ແລະ ຍືນຍົງ ໂດຍໄດ້ມີການຜັນຂະຫຍາຍໄປເປັນແຜນການສະເພາະຂອງແຕ່ລະຂະແໜງການ ເຊິ່ງສໍາລັບຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດ ລ້ອມ ວຽກການຄຸ້ມຄອງສິ່ງເສດເຫຼືອ ທີ່ເປັນຂອບວຽກຫຼັກໜຶ່ງຂອງການຈັດຕັ້ງປະຕິບັດການບໍລິໂພກ ແລະ ການຜະລິດແບບຍືນຍົງ ກໍໄດ້ຖືກກໍານົດໄວ້ໃນຈຸດສຸມດ້ານສິ່ງແວດລ້ອມ ຂໍ້ທີ 3 ຂອງແຜນການ 5 ປີ 2021-2025 ຂອງຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ທີ່ຕິດພັນກັບການສົ່ງເສີມຄຸນນະພາບສິ່ງແວດລ້ອມທີ່ດີເພື່ອຮັບປະກັນຄຸນນະພາບຊີວິດທີ່ດີ ແລະ ການພັດທະນາຕາມທິດສີຂຽວ ແລະ ຍືນຍົງ.

ການບໍລິໂພກ ແລະ ການຜະລິດແບບຍືນຍົງ (Sustainable Consumption and Production ຫຼື SCP) ແມ່ນໜຶ່ງໃນເປົ້າໝາຍການພັດທະນາແບບຍືນຍົງເປົ້າໝາຍທີ 12 (Sustainable Development Goal ຫຼື SDG 12) ໂດຍມີຈຸດປະສົງໃນການຮັບປະກັນການນໍາໃຊ້ຊັບພະຍາກອນທໍາມະຊາດຢ່າງມີຄວາມຮັບຜິດຊອບ ໂດຍຫັນມາເປັນຮູບແບບຍືນຍົງ ເຊິ່ງແບ່ງອອກເປັນ 2 ສ່ວນຄື: ການບໍລິໂພກ ແລະ ການນໍາໃຊ້ຊັບພະຍາກອນທໍາມະຊາດເຂົ້າໃນການຜະລິດ ໂດຍກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເຮັດໜ້າທີ່ເປັນຈຸດປະສານງານແຫ່ງຊາດຂອງວຽກງານດັ່ງກ່າວ.

ເນື່ອງຈາກ ການບໍລິໂພກ ແລະ ການຜະລິດແບບຍືນຍົງ ແມ່ນວຽກທີ່ພົວພັນ ແລະ ໄດ້ຮັບການຈັດຕັ້ງປະຕິບັດໃນຫຼາຍຂະແໜງການເຊັ່ນ: ຂະແໜງການອຸດສາຫະກໍາ ແລະ ການຄ້າ, ຂະແໜງການກະສິກໍາ ແລະ ປ່າໄມ້, ຂະແໜງການພະລັງງານ ແລະ ບໍ່ແຮ່ ທີ່ຕິດພັນກັບການຜະລິດ ແລະ ການແປຮູບຜະລິດຕະພັນຕ່າງໆຜ່ານການນໍາໃຊ້ຊັບພະຍາກອນ; ຂະແໜງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຂະ

ແໜງການໂຍທາທິການ ແລະ ຂົນສົ່ງ, ຂະແໜງການສຶກສາທິການ ແລະ ກິລາ, ຂະແໜງການຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການປົກປັກອື່ນໆ ກໍ່ມີບົດບາດຕິດພັນກັບການຄຸ້ມຄອງສິ່ງເສດເຫຼືອຈາກການຜະລິດ, ການບໍລິໂພກ ແລະ ການບໍລິການ ລວມເຖິງການສະໜອງຂໍ້ມູນ-ຂ່າວສານ ແລະ ການປູກຈິດສຳນຶກດ້ານການບໍລິໂພກຢ່າງມີຄວາມຮັບຜິດຊອບໃນທົ່ວສັງຄົມ ແລະ ວຽກປົກປັກອື່ນໆ ໃນໄລຍະຜ່ານມາເຫັນວ່າຍັງບໍ່ທັນມີຄວາມເປັນເອກະພາບ, ບໍ່ລວມສູນ ແລະ ມີລັກສະນະຊໍ້າຊ້ອນກັນ. ດ້ວຍເຫດຜົນດັ່ງກ່າວ, ຈຶ່ງມີຄວາມຈຳເປັນໃນການສ້າງແຜນງານ ການບໍລິໂພກ ແລະ ການຜະລິດແບບຍືນຍົງ ຂອງ ສປປ ລາວ ຂຶ້ນ ເພື່ອກຳນົດແຜນ, ກິດຈະກຳບູລິມະສິດ ແລະ ແບ່ງຄວາມຮັບຜິດຊອບໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນລະຫວ່າງ ຂະແໜງການກ່ຽວຂ້ອງ ພ້ອມທັງມີການກຳນົດກົນໄກຕິດຕາມກວດກາ, ປະເມີນຜົນ ແລະ ລາຍງານຢ່າງເປັນລະບົບ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບ ການບໍລິໂພກ ແລະ ການຜະລິດແບບຍືນຍົງ ເປັນລະບົບ, ເປັນຮູບປະທຳ, ມີປະສິດທິພາບ ແລະ ປະສິດທິຜົນ.

## II. ວິໄສທັດ

ພາຍໃນປີ 2030, ສປປ ລາວ ຈະກາຍເປັນປະເທດທີ່ບໍລິໂພກສິນຄ້າ ແລະ ການບໍລິການ ທີ່ເປັນມິດກັບສິ່ງແວດລ້ອມ, ການພັດທະນາເສດຖະກິດໝັ້ນທ່ຽງ ດ້ວຍການນຳໃຊ້ເຕັກໂນໂລຊີການຜະລິດທີ່ສະອາດຫຼາຍຂຶ້ນ, ນຳໃຊ້ພະລັງງານໝູນວຽນ, ປະຢັດພະລັງງານ, ສົ່ງເສີມການທ່ອງທ່ຽວທີ່ເປັນມິດກັບສິ່ງແວດລ້ອມ, ສິ່ງເສດເຫຼືອມີການຄຸ້ມຄອງທີ່ດີ ແລະ ການພັດທະນາໄປຕາມທິດສີຂຽວ ແລະ ຍືນຍົງ.

## III. ເປົ້າໝາຍ

1) ຈັດຕັ້ງປະຕິບັດການບໍລິໂພກ ແລະ ການຜະລິດແບບຍືນຍົງ ຮັບປະກັນຄວາມໝັ້ນທ່ຽງຂອງການພັດທະນາເສດຖະກິດ-ສັງຄົມ ຄຽງຄູ່ກັບການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມຕາມທິດສີຂຽວ ແລະ ຍືນຍົງ ພ້ອມທັງເຊື່ອມສານການບໍລິໂພກ ແລະ ການຜະລິດແບບຍືນຍົງ ເຂົ້າກັບຍຸດທະສາດ, ນະໂຍບາຍ, ແຜນງານ ຂອງບັນດາຂະແໜງການກ່ຽວຂ້ອງ;
2) ຈັດຕັ້ງປະຕິບັດ ການບໍລິໂພກ ແລະ ການຜະລິດແບບຍືນຍົງ ດ້ວຍການນຳໃຊ້ການຜະລິດທີ່ຍືນຍົງຜ່ານການສົ່ງເສີມ ແລະ ນຳໃຊ້ນະວັດຕະກຳເຕັກໂນໂລຊີສະອາດເປັນມິດກັບສິ່ງແວດລ້ອມເຂົ້າໃນການຜະລິດ, ນຳໃຊ້ຊັບພະຍາກອນທຳມະຊາດຢ່າງຄຸ້ມຄ່າ, ປະຢັດພະລັງງານ ແລະ ຫຼຸດຜ່ອນສິ່ງເສດເຫຼືອພ້ອມທັງຫັນສິ່ງເສດເຫຼືອມາເປັນວັດຖຸດິບ;
3) ສົ່ງເສີມການທ່ອງທ່ຽວທີ່ເປັນມິດກັບສິ່ງແວດລ້ອມ ດ້ວຍການສະໜັບສະໜູນການຫັນເປັນການບໍລິການເປັນສີຂຽວ ແລະ ຍືນຍົງ ພ້ອມທັງຈັດຕັ້ງປະຕິບັດການເຊື່ອມແນວຄິດການບໍລິໂພກ ແລະ ການຜະລິດແບບຍືນຍົງເຂົ້າໃນຫຼັກສູດການສຶກສາທຸກຂັ້ນ ແລະ ໃນສື່ທຸກຮູບແບບ ແນໃສ່ຫັນປ່ຽນແນວຄິດ ແລະ ຮູບແບບການດຳລົງຊີວິດຂອງສັງຄົມ.

## IV. ຈຸດປະສົງ

ຫັນປ່ຽນຮູບແບບ ການບໍລິໂພກ ແລະ ການຜະລິດ ເປັນແບບຍືນຍົງດ້ວຍການປັບປຸງປະສິດທິພາບການນຳໃຊ້ຊັບພະຍາກອນ ແລະ ພະລັງງານ, ເພີ່ມທະວີການບໍລິໂພກຜະລິດຕະພັນ ແລະ ບໍລິການ ທີ່ຍືນຍົງ, ຫຼຸດຜ່ອນສິ່ງເສດເຫຼືອໃນທຸກຮູບແບບ ພ້ອມທັງສົ່ງເສີມການທ່ອງທ່ຽວທີ່ເປັນມິດກັບສິ່ງແວດລ້ອມ ແລະ ເຊື່ອມສານວຽກດັ່ງກ່າວເຂົ້າໃນຂະແໜງການສຶກສາທິການ ແລະ ກິລາໃນທຸກຂັ້ນ ແລະ ທຸກຮູບແບບ.

## V. ວຽກງານຫຼັກ

1. **ສ້າງ ແລະ ປັບປຸງຂອບນະໂຍບາຍໃນການຈັດຕັ້ງປະຕິບັດ ການບໍລິໂພກ ແລະ ການຜະລິດແບບຍືນຍົງ**

- ເຊື່ອມສານ ການບໍລິໂພກ ແລະ ການຜະລິດແບບຍືນຍົງເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ, ຍຸດທະສາດພັດທະນາ, ແຜນດຳເນີນງານ, ແຜນການໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ;
- ສ້າງ ແລະ ປັບປຸງຍຸດທະສາດ ແລະ ກົນໄກການມີສ່ວນຮ່ວມຂອງພາກລັດ ແລະ ເອກະຊົນ ໃນການຈັດຕັ້ງປະຕິບັດ ການບໍລິໂພກ, ການລົງທຶນການຜະລິດ, ການກະຈາຍ ບັນດາຜະລິດຕະພັນ ແລະ ການບໍລິການ ທີ່ເປັນມິດກັບສິ່ງແວດລ້ອມ ພ້ອມທັງສ້າງກົນໄກຕິດຕາມ ແລະ ປະເມີນຜົນ;
- ສ້າງ ແລະ ປັບປຸງ ນະໂຍບາຍ, ນິຕິກຳ ດ້ານການຄ້າ ເພື່ອສົ່ງເສີມຜະລິດຕະພັນ ແລະ ບໍລິການທີ່ເປັນມິດກັບສິ່ງແວດລ້ອມ.

2. **ສົ່ງເສີມການຜະລິດຜະລິດຕະພັນທີ່ເປັນມິດກັບສິ່ງແວດລ້ອມ**
   - ສຶກສາ ແລະ ປະເມີນຄືນ ກ່ຽວກັບ ຜະລິດຕະພັນພາຍໃນທີ່ເປັນມິດກັບສິ່ງແວດລ້ອມ ເພື່ອຈັດປະເພດ ແລະ ຄົ້ນຄວ້າທ່າແຮງບົ່ມຊ້ອນ ພ້ອມທັງສົ່ງເສີມບັນດາຜະລິດຕະພັນພາຍໃນທີ່ເປັນມິດກັບສິ່ງແວດລ້ອມເຫຼົ່ານັ້ນ ໃຫ້ສາມາດແຂ່ງຂັນກັບຕະຫຼາດພາຍໃນ ແລະ ສາກົນ;
   - ຈັດຕັ້ງປະຕິບັດການສ້າງຜະລິດຕະພັນສະອາດຜ່ານກົນໄກການຜະລິດສະອາດ, ປະຢັດພະລັງງານ , ສຶກສາ ແລະ ນຳໃຊ້ເຕັກໂນໂລຊີສະອາດ ແລະ ຍືນຍົງ ລວມທັງຢຸດຕິການຜະລິດທີ່ສິ້ນເປືອງພະລັງງານ ແລະ ສ້າງມົນລະພິດ;
   - ສ້າງຜະລິດຕະພັນທີ່ມີຮູບແບບການຜະລິດທີ່ຍືນຍົງເພື່ອເປັນຜະລິດຕະພັນຫຼັກ ພ້ອມທັງສົ່ງເສີມການພັດທະນາອຸດສາຫະກຳສິ່ງແວດລ້ອມ;
   - ສ້າງ ແລະ ປັບປຸງກົນໄກເພື່ອສົ່ງເສີມການນຳໃຊ້ພາຫະນະທີ່ຂັບເຄື່ອນດ້ວຍພະລັງງານສະອາດ ແລະ ພະລັງງານທີ່ຜະລິດຢູ່ໃນປະເທດ ແນໃສ່ຫຼຸດຜ່ອນການນຳເຂົ້າພະລັງງານເຊື້ອໄຟ, ຫຼຸດຜ່ອນມົນລະພິດ ດ້ວຍນະໂຍບາຍດ້ານພາສີ-ອາກອນ ໃຫ້ແກ່ຜະລິດຕະພັນ ແລະ ຊິ້ນສ່ວນອາໄຫຼ່ຂອງພາຫະນະທີ່ເປັນມິດກັບສິ່ງແວດລ້ອມ.

3. **ການຄຸ້ມຄອງສິ່ງເສດເຫຼືອ**
   - ສ້າງ ແລະ ປັບປຸງຂອບນະໂຍບາຍໃນການສົ່ງເສີມການນຳເອົາສິ່ງເສດເຫຼືອມາຜະລິດຄືນໃໝ່ ແລະ ກິດຈະກຳນຳໃຊ້ຊ້ຳ ແລະ ສົ່ງເສີມການຄຸ້ມຄອງສິ່ງເສດເຫຼືອແບບເຊື່ອມສານ;
   - ສົ່ງເສີມ ການບໍລິການເກັບມ້ຽນສິ່ງເສດເຫຼືອຕາມມາດຕະຖານສາກົນ ແລະ ທັນສະໄໝ;
   - ຈັດຕັ້ງປະຕິບັດກິດຈະກຳປູກຈິດສຳນຶກໃນການແຍກສິ່ງເສດເຫຼືອແນໃສ່ການຫຼຸດຜ່ອນ, ນຳໃຊ້ຊ້ຳ ແລະ ນຳເອົາສິ່ງເສດເຫຼືອໄປຜະລິດຄືນໃໝ່ຈາກຄົວເຮືອນ, ຊຸມຊົນ, ວິສາຫະກິດ ແລະ ພາກອຸດສາຫະກຳ;
   - ແນະນຳ ແລະ ສະໜັບສະໜູນດ້ານວິຊາການ ໃນກິດຈະກຳ ຫຼຸດຜ່ອນ, ນຳໃຊ້ຊ້ຳ ແລະ ນຳເອົາສິ່ງເສດເຫຼືອໄປຜະລິດຄືນໃໝ່ ຈາກຄົວເຮືອນ ແລະ ວິສາຫະກິດ ພ້ອມທັງຄວບຄຸມການນຳເຂົ້າຜະລິດຕະພັນ ແລະ ບັນຈຸພັນທີ່ເປັນຜົນເສຍຕໍ່ສິ່ງແວດລ້ອມ;
   - ສ້າງແຜນປ້ອງກັນ ແລະ ຄວບຄຸມເຫດສຸກເສີນດ້ານສິ່ງແວດລ້ອມຈາກການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ການຄຸ້ມຄອງສິ່ງເສດເຫຼືອ.

4. **ຊຸກຍູ້ພຶດຕິກຳການບໍລິໂພກ ຫັນສູ່ຮູບແບບການດຳລົງຊີວິດແບບຍືນຍົງ**
   - ສົ່ງເສີມ ແລະ ປູກຈິດສຳນຶກກ່ຽວກັບຮູບແບບການດຳລົງຊີວິດ ແລະ ການບໍລິໂພກແບບຍືນຍົງ ໂດຍສະເພາະການສະໜັບສະໜູນການຫຼຸດຜ່ອນສິ່ງເສດເຫຼືອ, ສັງຄົມກາກບອນຕ່ຳ ແລະ ສັງຄົມທີ່ມີຄວາມຍືນຍົງ;

- ສ້າງສື່ ແລະ ຊ່ອງທາງໂຄສະນາກ່ຽວກັບສິນຄ້າ ແລະ ບໍລິການທີ່ເປັນມິດກັບສິ່ງແວດລ້ອມໃຫ້ແກ່ຜູ້ຊົມໃຊ້, ຈັດຝຶກອົບຮົມ ແລະ ເຜີຍແຜ່ກິດຈະກຳເພື່ອໃຫ້ຂໍ້ມູນ ແລະ ປູກຈິດສຳນຶກ ກ່ຽວກັບການບໍລິໂພກ ແລະ ການຜະລິດແບບຍືນຍົງໃຫ້ແກ່ພະນັກງານລັດ ແລະ ພະນັກງານເອກະຊົນ;
- ສົ່ງເສີມການສະໜອງຂໍ້ມູນ-ຂ່າວສານກ່ຽວກັບສິນຄ້າ ແລະ ບໍລິການທີ່ເປັນມິດກັບສິ່ງແວດລ້ອມໃຫ້ເຂົ້າເຖິງຜູ້ບໍລິໂພກ;
- ດຳເນີນການສ້າງມາດຖານສະຫຼາກສີຂຽວຂອງ ສປປ ລາວ ແລະ ກົນໄກກ່ຽວຂ້ອງເພື່ອເປັນມາດຖານໃນການຮັບຮອງຜະລິດຕະພັນ ແລະ ການບໍລິການທີ່ເປັນມິດກັບສິ່ງແວດລ້ອມ;
- ສົ່ງເສີມການຈັດຕັ້ງປະຕິບັດຈັດຊື້-ຈັດຈ້າງສີຂຽວດ້ວຍທຶນຂອງລັດ ດ້ວຍການປັບປຸງກົນໄກດ້ານນິຕິກຳຕ່າງໆເພື່ອໃຫ້ພາກລັດສາມາດດຳເນີນການຈັດຊື້-ຈັດຈ້າງ ສິນຄ້າ ແລະ ບໍລິການທີ່ເປັນມິດກັບສິ່ງແວດລ້ອມ;
- ສົ່ງເສີມພາກເອກະຊົນໃນການລິເລີ່ມການສ້າງກົນໄກສະໜັບສະໜູນການນຳເຂົ້າ, ການຈັດຊື້-ຈັດຈ້າງ ສິນຄ້າ ແລະ ບໍລິການທີ່ເປັນມິດກັບສິ່ງແວດລ້ອມ.

5. **ສົ່ງເສີມການບໍລິການທ່ອງທ່ຽວທີ່ເປັນມິດກັບສິ່ງແວດລ້ອມ ແລະ ການສຶກສາສິ່ງແວດລ້ອມ**
   - ສົ່ງເສີມ ຮ້ານອາຫານ, ເຮືອນພັກ, ໂຮງແຮມ ແລະ ແຫຼ່ງທ່ອງທ່ຽວ ໃຫ້ສະໜັບສະໜູນການບໍລິໂພກ ແລະ ການຜະລິດແບບຍືນຍົງດ້ວຍການນຳໃຊ້ສິນຄ້າທີ່ເປັນມິດກັບສິ່ງແວດລ້ອມ ພ້ອມທັງແຍກ ແລະ ຫຼຸດຜ່ອນສິ່ງເສດເຫຼືອຈາກການບໍລິການ;
   - ສ້າງມາດຖານສຳລັບຮ້ານອາຫານ, ເຮືອນພັກ, ໂຮງແຮມ ແລະ ແຫຼ່ງທ່ອງທ່ຽວ ທີ່ໄດ້ຮັບການຮັບຮອງວ່າເປັນມິດກັບສິ່ງແວດລ້ອມ ພ້ອມທັງສ້າງກົນໄກປະຊາສຳພັນ ເພື່ອສ້າງແຮງຈູງໃຈ ແລະ ສະໜອງຂໍ້ມູນໃຫ້ແກ່ເຈົ້າຂອງທຸລະກິດ ແລະ ຜູ້ບໍລິໂພກ;
   - ເຊື່ອມສານແນວຄິດ ການບໍລິໂພກ ແລະ ການຜະລິດແບບຍືນຍົງເຂົ້າໃນຫຼັກສູດການສຶກສາທຸກຂັ້ນ ແລະ ໃນສື່ທຸກຮູບແບບ ແນໃສ່ຫັນປ່ຽນແນວຄິດ ແລະ ຮູບແບບການດຳລົງຊີວິດຂອງສັງຄົມ.

## VI. ແຜນກິດຈະກຳບູລິມະສິດ

### 1. ສ້າງ ແລະ ປັບປຸງຂອບນະໂຍບາຍໃນການຈັດຕັ້ງປະຕິບັດ ການບໍລິໂພກ ແລະ ການຜະລິດແບບຍືນຍົງ

#### 1.1. ຈຸດປະສົງ:

- ສ້າງຂອບນະໂຍບາຍ ແລະ ນິຕິກຳ ສະໜັບສະໜູນການມີສ່ວນຮ່ວມຂອງອົງການຈັດຕັ້ງຕ່າງໆໃນການຈັດຕັ້ງປະຕິບັດ ການບໍລິໂພກ ແລະ ການຜະລິດແບບຍືນຍົງ;
- ຕອບສະໜອງໃຫ້ແກ່ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ:
  12.1.1- ແຜນດຳເນີນງານການບໍລິໂພກ ແລະ ການຜະລິດແບບຍືນຍົງ.

#### 1.2. ເປົ້າໝາຍ:

ລະບຽບການ, ມາດຖານ, ກົນໄກ ແລະ ນະໂຍບາຍກ່ຽວກັບການບໍລິໂພກ ແລະ ການຜະລິດແບບຍືນຍົງໄດ້ຮັບການຈັດຕັ້ງປະຕິບັດ.

#### 1.3. ກິດຈະກຳຫຼັກ:

(1) ທົບທວນ ແລະ ແນະນຳ ການເຊື່ອມສານ ການບໍລິໂພກ ແລະ ການຜະລິດແບບຍືນຍົງເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດການເຕີບໂຕສີຂຽວແຫ່ງ

ຊາດ, ຍຸດທະສາດການພັດທະນາ, ແຜນດໍາເນີນງານ ແລະ ແຜນການໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ;

(2) ເຊື່ອມສານ ການບໍລິໂພກ ແລະ ການຜະລິດແບບຍືນຍົງເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ, ຍຸດທະສາດພັດທະນາ, ແຜນດໍາເນີນງານ ແລະ ແຜນການໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ;

(3) ສ້າງ ແລະ ປັບປຸງຍຸດທະສາດ ແລະ ກົນໄກການມີສ່ວນຮ່ວມຂອງພາກລັດ ແລະ ເອກະຊົນ ໃນການຈັດຕັ້ງປະຕິບັດ ການບໍລິໂພກ, ການລົງທຶນການຜະລິດ, ການກະຈາຍຜະລິດຕະພັນ ແລະ ການບໍລິການ ທີ່ເປັນມິດກັບສິ່ງແວດລ້ອມ;

(4) ສ້າງ ແລະ ປັບປຸງ ນະໂຍບາຍ, ນິຕິກໍາດ້ານການຄ້າເພື່ອສົ່ງເສີມຜະລິດຕະພັນ ແລະ ບໍລິການທີ່ເປັນມິດກັບສິ່ງແວດລ້ອມ; ຜະລິດຕະພັນທີ່ບໍ່ທັນຜ່ານມາດຖານທີ່ເປັນຜະລິດຕະພັນກັບສິ່ງແວດລ້ອມທີ່ມີທ່າແຮງ; ລວມເຖິງການຮອງຮັບຜົນກະທົບຈາກການຫັນປ່ຽນຂອງຜູ້ບໍລິໂພກ ແລະ ຜູ້ຜະລິດໄປເປັນແບບຍືນຍົງ;

(5) ສ້າງ ແລະ ປັບປຸງກົນໄກການຕິດຕາມ ແລະ ປະເມີນຜົນການເຊື່ອມສານການບໍລິໂພກ ແລະ ການຜະລິດແບບຍືນຍົງເຂົ້າໃນຍຸດທະສາດພັດທະນາ, ແຜນດໍາເນີນງານ ແລະ ແຜນການໃນທຸກຂັ້ນ.

**1.4. ອົງການຈັດຕັ້ງຫຼັກ ແລະ ອົງການຈັດຕັ້ງສະໜັບສະໜູນ:**

- ອົງການຈັດຕັ້ງຫຼັກ: ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຄຸ້ມຄອງການຈັດຕັ້ງປະຕິບັດແຜນງານ ແລະ ການລະດົມທຶນ.
- ອົງການຈັດຕັ້ງຫຼັກ: ກະຊວງແຜນການ ແລະ ການລົງທຶນ ຈັດຕັ້ງປະຕິບັດກິດຈະກໍາຫຼັກ: (1), (2), (5).
- ອົງການຈັດຕັ້ງຫຼັກ: ກະຊວງອຸດສາຫະກໍາ ແລະ ການຄ້າ ຈັດຕັ້ງປະຕິບັດກິດຈະກໍາຫຼັກ: (3), (4).
- ອົງການຈັດຕັ້ງສະໜັບສະໜູນ: ກະຊວງການເງິນ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ ແລະ ອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນກ່ຽວຂ້ອງອື່ນໆ.

**1.5. ຂອບເວລາ:** 2022-2025

**1.6. ແຫຼ່ງທຶນ:** ງົບປະມານລັດ, ທຶນຊ່ວຍເຫຼືອລ້າ ແລະ ອື່ນໆ.

## 2. ສົ່ງເສີມ ການຜະລິດ ແລະ ການນໍາໃຊ້ ຜະລິດຕະພັນທີ່ເປັນມິດກັບສິ່ງແວດລ້ອມ

**2.1. ຈຸດປະສົງ:**

- ເພີ່ມປະລິມານຜະລິດຕະພັນທີ່ເປັນມິດກັບສິ່ງແວດລ້ອມໃນຕະຫຼາດໃຫ້ພຽງພໍກັບຄວາມຕ້ອງການໃນລາຄາທີ່ສົມເຫດສົມຜົນ ແລະ ສາມາດແຂ່ງຂັນໄດ້;
- ຕອບສະໜອງໃຫ້ແກ່ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ:
  12.2-ການຄຸ້ມຄອງ ແລະ ການນໍາໃຊ້ຊັບພະຍາກອນທໍາມະຊາດແບບຍືນຍົງ;
  12.4-ການຄຸ້ມຄອງສານເຄມີ ແລະ ສິ່ງເສດເຫຼືອຢ່າງມີຮັບຜິດຊອບ;
  12.c-ກໍາຈັດຄວາມບິດເບືອນຂອງຕະຫຼາດ ແລະ ສົ່ງເສີມການບໍລິໂພກສິ່ງເສດເຫຼືອ.

**2.2. ເປົ້າໝາຍ:**

ລະບຽບການ, ມາດຖານ, ກົນໄກ ແລະ ນະໂຍບາຍ ກ່ຽວກັບ ການສົ່ງເສີມຜະລິດຕະພັນ ແລະ ການບໍລິການ ທີ່ເປັນມິດກັບສິ່ງແວດລ້ອມຖືກຈັດຕັ້ງປະຕິບັດ.

**2.3. ກິດຈະກຳຫຼັກ:**

(1) ສຶກສາ ແລະ ປະເມີນຄືນ ກ່ຽວກັບ ຜະລິດຕະພັນພາຍໃນທີ່ເປັນມິດກັບສິ່ງແວດລ້ອມເພື່ອຈັດປະເພດ ແລະ ຄົ້ນຄວ້າທ່າແຮງບົ່ມຊ້ອນຂອງຜະລິດຕະພັນພາຍໃນເຫຼົ່ານັ້ນ;

(2) ສ້າງກົນໄກເພື່ອສົ່ງເສີມບັນດາຜະລິດຕະພັນພາຍໃນທີ່ເປັນມິດກັບສິ່ງແວດລ້ອມໃຫ້ສາມາດແຂ່ງຂັນໃນຕະຫຼາດພາຍໃນ ແລະ ສາກົນ;

(3) ສຶກສາ, ຄົ້ນຄວ້າ ແລະ ສົ່ງເສີມຜະລິດຕະພັນສະອາດ ຜ່ານກົນໄກການຜະລິດສະອາດ, ນຳໃຊ້ຊັບພະຍາກອນທຳມະຊາດຢ່າງຄຸ້ມຄ່າ, ປະຢັດພະລັງງານ, ສຶກສາ ແລະ ນຳໃຊ້ເຕັກໂນໂລຊີສະອາດ;

(4) ຈັດຕັ້ງປະຕິບັດກິດຈະກຳ, ໂຄງການຕົວແບບໃນການສ້າງຜະລິດຕະພັນທີ່ມີຮູບແບບການຜະລິດທີ່ຍືນຍົງເພື່ອໃຫ້ເປັນຜະລິດຕະພັນພາຍໃນຫຼັກ;

(5) ສ້າງ ແລະ ປັບປຸງ ກົນໄກຄວບຄຸມການຜະລິດ, ການນຳເຂົ້າຜະລິດຕະພັນ ແລະ ບັນຈຸພັນທີ່ເປັນຜົນເສຍຕໍ່ສິ່ງແວດລ້ອມ;

(6) ສ້າງກົນໄກສົ່ງເສີມການພັດທະນາອຸດສາຫະກຳທີ່ເປັນມິດກັບສິ່ງແວດລ້ອມ ຕິດພັນກັບການບໍລິໂພກ ແລະ ການຜະລິດແບບຍືນຍົງ;

(7) ສ້າງກົນໄກເພື່ອສົ່ງເສີມການນຳໃຊ້ພາຫະນະທີ່ຂັບເຄື່ອນດ້ວຍພະລັງງານສະອາດ ແລະພະລັງງານທີ່ຜະລິດຢູ່ໃນປະເທດ ແນໃສ່ຫຼຸດຜ່ອນການນຳເຂົ້າພະລັງງານເຊື້ອໄຟ ຫຼຸດຜ່ອນມົນລະພິດດ້ວຍນະໂຍບາຍດ້ານພາສີ-ອາກອນ ໃຫ້ແກ່ຜະລິດຕະພັນ ແລະ ຊິ້ນສ່ວນອາໄຫຼ່ຂອງພາຫະນະທີ່ເປັນມິດກັບສິ່ງແວດລ້ອມ;

(8) ສ້າງ ແລະ ຈັດຕັ້ງປະຕິບັດໂຄງການຕົວແບບໃນການນຳໃຊ້ພາຫະນະທີ່ຂັບເຄື່ອນດ້ວຍພະລັງງານສະອາດ ແລະ ພະລັງງານທີ່ຜະລິດຢູ່ໃນປະເທດ ເຂົ້າໃນການຂົນສົ່ງສາທາລະນະພ້ອມທັງມີການຕິດຕາມ, ປະເມີນຜົນ ແລະ ຜັນຂະຫຍາຍໃນທົ່ວປະເທດ;

(9) ສ້າງໂຄງການທົດລອງລິເລີ່ມການສ້າງກົນໄກສະໜັບສະໜູນການນຳເຂົ້າ, ການຈັດຊື້-ຈັດຈ້າງ ສິນຄ້າ ແລະ ບໍລິການທີ່ເປັນມິດກັບສິ່ງແວດລ້ອມໃນພາກເອກະຊົນ.

**2.4. ອົງການຈັດຕັ້ງຫຼັກ ແລະ ອົງການຈັດຕັ້ງສະໜັບສະໜູນ:**

- ອົງການຈັດຕັ້ງຫຼັກ: ກະຊວງອຸດສາຫະກຳ ແລະ ການຄ້າ ຈັດຕັ້ງປະຕິບັດກິດຈະກຳຫຼັກ: (1)-(6) ແລະ (9).
- ອົງການຈັດຕັ້ງຫຼັກ: ກະຊວງພະລັງງານ ແລະ ບໍ່ແຮ່ ຈັດຕັ້ງປະຕິບັດກິດຈະກຳຫຼັກ: (7).
- ອົງການຈັດຕັ້ງຫຼັກ: ກະຊວງໂຍທາທິການ ແລະ ຂົນສົ່ງ ຈັດຕັ້ງປະຕິບັດກິດຈະກຳຫຼັກ: (8).
- ອົງການຈັດຕັ້ງສະໜັບສະໜູນ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນກ່ຽວຂ້ອງອື່ນໆ.

**2.5. ຂອບເວລາ:** 2022-2025

**2.6. ແຫຼ່ງທຶນ:** ງົບປະມານລັດ, ທຶນຊ່ວຍເຫຼືອລ້າ ແລະ ອື່ນໆ.

## 3. ການຄຸ້ມຄອງສິ່ງເສດເຫຼືອ

**3.1. ຈຸດປະສົງ:**

- ສົ່ງເສີມການຄຸ້ມຄອງສິ່ງເສດເຫຼືອແບບຍືນຍົງ.
- ຕອບສະໜອງໃຫ້ແກ່ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ:

12.4-ການຄຸ້ມຄອງສານເຄມີ ແລະ ສິ່ງເສດເຫຼືອຢ່າງມີຮັບຜິດຊອບ;

12.5-ຫຼຸດຜ່ອນການສ້າງສິ່ງເສດເຫຼືອແບບຍືນຍົງ.

**3.2. ເປົ້າໝາຍ:**

ວິສາຫະກິດ, ວິສາຫະກິດຂະໜາດກາງ ແລະ ນ້ອຍ ແລະ ຊຸມຊົນ.

**3.3. ກິດຈະກຳຫຼັກ:**

(1) ນຳພາ ແລະ ສ້າງກິດຈະກຳຕົວແບບ ແລະ ການສາທິດການຫຼຸດຜ່ອນ, ນຳໃຊ້ຊ້ຳ ແລະ ນຳເອົາສິ່ງເສດເຫຼືອໄປຜະລິດຄືນໃໝ່ ແນໃສ່ຫຼຸດຜ່ອນປະລິມານສິ່ງເສດເຫຼືອໃນສະໜາມຂີ້ເຫຍື້ອ ແລະ ຫຼຸດຜ່ອນການຈູດຂີ້ເຫຍື້ອຊະຊາຍ ;

(2) ຈັດຕັ້ງປະຕິບັດກິດຈະກຳປູກຈິດສຳນຶກໃນການແຍກສິ່ງເສດເຫຼືອແນໃສ່ການຫຼຸດຜ່ອນ, ນຳໃຊ້ຊ້ຳ ແລະ ນຳເອົາສິ່ງເສດເຫຼືອໄປຜະລິດຄືນໃໝ່ຈາກຄົວເຮືອນ, ຊຸມຊົນ, ວິສາຫະກິດ ແລະ ພາກອຸດສາຫະກຳ;

(3) ແນະນຳ ແລະ ສະໜັບສະໜູນດ້ານວິຊາການໃນກິດຈະກຳຫຼຸດຜ່ອນ, ນຳໃຊ້ຊ້ຳ ແລະ ນຳເອົາສິ່ງເສດເຫຼືອໄປຜະລິດຄືນໃໝ່ ພ້ອມທັງສ້າງເປັນໂຄງການ, ກິດຈະກຳ ແນໃສ່ຫຼຸດຜ່ອນ ແລະ ແຍກສິ່ງເສດເຫຼືອຈາກຄົວເຮືອນ, ວິສາຫະກິດ ແລະ ອຸດສາຫະກຳ;

(4) ສ້າງໂຄງການຕົວແບບ ຫຼື ໂຄງການສາທິດໃນການຄຸ້ມຄອງສິ່ງເສດເຫຼືອຈາກພາກອຸດສາຫະກຳຕິດພັນກັບການຫຼຸດຜ່ອນສິ່ງເສດເຫຼືອ, ການໃຊ້ຊ້ຳ ແລະ ການນຳເອົາສິ່ງເສດເຫຼືອຈາກໂຮງງານໜຶ່ງໄປເປັນວັດຖຸດິບຂອງໂຮງງານອື່ນ;

(5) ສ້າງ ແລະ ປັບປຸງນິຕິກຳໃນການສົ່ງເສີມການຫຼຸດຜ່ອນ, ການນຳເອົາສິ່ງເສດເຫຼືອມາຜະລິດຄືນໃໝ່ ແລະ ກິດຈະກຳນຳໃຊ້ຊ້ຳ, ສົ່ງເສີມການຄຸ້ມຄອງສິ່ງເສດເຫຼືອແບບເຊື່ອມສານ;

(6) ສ້າງແຜນປ້ອງກັນ ແລະ ຄວບຄຸມເຫດສຸກເສີນດ້ານສິ່ງແວດລ້ອມຈາກການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ການຄຸ້ມຄອງສິ່ງເສດເຫຼືອ ດ້ວຍການສ້າງເປັນໂຄງການສາທິດ ແລະ ຜັນຂະຫຍາຍໃນຂອບເຂດທົ່ວປະເທດ ພ້ອມທັງຕິດຕາມ, ປະເມີນຜົນ ແລະ ຖອດຖອນບົດຮຽນທຸກກິດຈະກຳ.

**3.4. ອົງການຈັດຕັ້ງຫຼັກ ແລະ ອົງການຈັດຕັ້ງສະໜັບສະໜູນ:**

- ອົງການຈັດຕັ້ງຫຼັກ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈັດຕັ້ງປະຕິບັດກິດຈະກຳຫຼັກ: (1), (2), (3), (5), (6).
- ອົງການຈັດຕັ້ງຫຼັກ: ກະຊວງອຸດສາຫະກຳ ແລະ ການຄ້າ ຈັດຕັ້ງປະຕິບັດກິດຈະກຳຫຼັກ: (4).
- ອົງການຈັດຕັ້ງສະໜັບສະໜູນ: ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນກ່ຽວຂ້ອງອື່ນໆ.

**3.5. ຂອບເວລາ:** 2022-2025

**3.6. ແຫຼ່ງທຶນ:** ງົບປະມານລັດ, ທຶນຊ່ວຍເຫຼືອລ້າ ແລະ ອື່ນໆ.

**4. ຊຸກຍູ້ພຶດຕິກຳການບໍລິໂພກ ຫັນສູ່ຮູບແບບການດຳລົງຊີວິດແບບຍືນຍົງ**

**4.1. ຈຸດປະສົງ:**

- ຜູ້ບໍລິໂພກມີຄວາມເຂົ້າໃຈຫຼັກການກ່ຽວກັບການບໍລິໂພກ ແລະ ການຜະລິດແບບຍືນຍົງ ແລະ ຫັນປ່ຽນຮູບແບບການດຳລົງຊີວິດແບບຍືນຍົງ.
- ຕອບສະໜອງໃຫ້ແກ່ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ:

12.5-ຫຼຸດຜ່ອນການສ້າງສິ່ງເສດເຫຼືອແບບຍືນຍົງ;

12.8-ສົ່ງເສີມຄວາມເຂົ້າໃຈທົ່ວໄປກ່ຽວກັບວິຖີຊີວິດແບບຍືນຍົງ.

**4.2. ເປົ້າໝາຍ:**

ປະຊາຊົນ, ຊຸມຊົນ ແລະ ວິສາຫະກິດ

**4.3. ກິດຈະກໍາຫຼັກ:**

(1) ສົ່ງເສີມ, ເຜີຍແຜ່ ແລະ ປູກຈິດສໍານຶກກ່ຽວກັບຮູບແບບການດໍາລົງຊີວິດ ແລະ ການບໍລິໂພກແບບຍືນຍົງໂດຍສະເພາະການສະໜັບສະໜູນການຫຼຸດຜ່ອນສິ່ງເສດເຫຼືອ, ສັງຄົມຄາບອນຕໍ່າ ແລະ ສັງຄົມທີ່ມີຄວາມຍືນຍົງ;

(2) ສ້າງສື່ ແລະ ຊ່ອງທາງໂຄສະນາສິນຄ້າ ແລະ ບໍລິການທີ່ເປັນມິດກັບສິ່ງແວດລ້ອມໃຫ້ແກ່ຜູ້ຊົມໃຊ້, ຈັດຝຶກອົບຮົມ ແລະ ເຜີຍແຜ່ກິດຈະກໍາເພື່ອໃຫ້ຂໍ້ມູນ ແລະ ປູກຈິດສໍານຶກກ່ຽວກັບການບໍລິໂພກ ແລະ ການຜະລິດແບບຍືນຍົງໃຫ້ແກ່ພາກສ່ວນລັດ ແລະ ເອກະຊົນໂດຍສະເພາະການເຂົ້າມາມີສ່ວນຮ່ວມຂອງແມ່ຍິງ;

(3) ສ້າງໂຄງການຕົວແບບໃນການສົ່ງເສີມ ແລະ ເຜີຍແຜ່ ການຫຼຸດຜ່ອນສິ່ງເສດເຫຼືອຈາກທຸລະກິດຮ້ານອາຫານ ແລະ ຕະຫຼາດສົດ, ການແຍກສິ່ງເສດເຫຼືອ ແລະ ການນໍາໃຊ້ຊັບພະຍາກອນທໍາມະຊາດໃຫ້ຄຸ້ມຄ່າໃນຂະແໜງທຸລະກິດຮ້ານອາຫານ, ເຮືອນພັກ, ໂຮງແຮມ ແລະ ແຫຼ່ງທ່ອງທ່ຽວ. ສ້າງກົນໄກຕິດຕາມ ແລະ ປະເມີນຜົນ ພ້ອມທັງຜັນຂະຫຍາຍໂຄງການອອກທົ່ວປະເທດ;

(4) ສົ່ງເສີມກົນໄກການສະໜອງຂໍ້ມູນ-ຂ່າວສານກ່ຽວກັບສິນຄ້າ ແລະ ບໍລິການທີ່ເປັນມິດກັບສິ່ງແວດລ້ອມໃຫ້ເຂົ້າເຖິງຜູ້ບໍລິໂພກດ້ວຍການນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝໃນການເຜີຍແຜ່ ແລະ ແລກປ່ຽນຂໍ້ມູນ-ຂ່າວສານ;

(5) ຈັດກິດຈະກໍາຕົວແບບໃນການນໍາໃຊ້ລົດຖີບ ເພື່ອປູກຈິດສໍານຶກກ່ຽວກັບ ການບໍລິໂພກ ແລະ ການຜະລິດແບບຍືນຍົງ, ສົ່ງເສີມສຸຂະພາບຂອງປະຊາຊົນ ແລະ ຫຼຸດຜ່ອນມົນລະພິດຈາກການນໍາໃຊ້ພາຫະນະທີ່ນໍາໃຊ້ພະລັງງານເຊື້ອໄຟ.

**4.4. ອົງການຈັດຕັ້ງຫຼັກ ແລະ ອົງການຈັດຕັ້ງສະໜັບສະໜູນ:**

- ອົງການຈັດຕັ້ງຫຼັກ: ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຈັດຕັ້ງປະຕິບັດກິດຈະກໍາຫຼັກ: (1), (2), (3), (5).
- ອົງການຈັດຕັ້ງຫຼັກ: ກະຊວງອຸດສາຫະກໍາ ແລະ ການຄ້າ ຈັດຕັ້ງປະຕິບັດກິດຈະກໍາຫຼັກ: (4).
- ອົງການຈັດຕັ້ງສະໜັບສະໜູນ: ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະ ກິລາ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນກ່ຽວຂ້ອງອື່ນໆ.

**4.5. ຂອບເວລາ:** 2022-2025

**4.6. ແຫຼ່ງທຶນ:** ງົບປະມານລັດ, ທຶນຊ່ວຍເຫຼືອລ້າ ແລະ ອື່ນໆ.

## 5. ສົ່ງເສີມການບໍລິການທ່ອງທ່ຽວທີ່ເປັນມິດກັບສິ່ງແວດລ້ອມ ແລະ ການສຶກສາສິ່ງແວດລ້ອມ

**5.1. ຈຸດປະສົງ:**

- ທຸລະກິດຮ້ານອາຫານ, ເຮືອນພັກ, ໂຮງແຮມ, ແຫຼ່ງທ່ອງທ່ຽວ ແລະ ສະຖາບັນການສຶກສາຫັນມາສະໜັບສະໜູນ ສິນຄ້າທີ່ເປັນມິດກັບສິ່ງແວດລ້ອມ ແລະ ຫຼຸດຜ່ອນສິ່ງເສດເຫຼືອ.
- ຕອບສະໜອງໃຫ້ແກ່ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ:

12.5-ຫຼຸດຜ່ອນການສ້າງສິ່ງເສດເຫຼືອແບບຍືນຍົງ;

12.8-ສົ່ງເສີມຄວາມເຂົ້າໃຈທົ່ວໄປກ່ຽວກັບວິຖີຊີວິດແບບຍືນຍົງ;

12.b-ສ້າງ ແລະ ຈັດຕັ້ງປະຕິບັດເຄື່ອງມືຕິດຕາມກວດກາການທ່ອງທ່ຽວແບບຍືນຍົງ.

**5.2. ເປົ້າໝາຍ:**

ຮ້ານອາຫານ, ເຮືອນພັກ, ໂຮງແຮມ, ແຫຼ່ງທ່ອງທ່ຽວ ແລະ ສະຖານສຶກສາ

**5.3. ກິດຈະກຳຫຼັກ:**

(1) ນຳພາ ແລະ ສົ່ງເສີມ ທຸລະກິດຮ້ານອາຫານ, ເຮືອນພັກ, ໂຮງແຮມ ແລະ ແຫຼ່ງທ່ອງທ່ຽວ ໃຫ້ສະໜັບສະໜູນການບໍລິໂພກ ແລະ ການຜະລິດແບບຍືນຍົງດ້ວຍການນຳໃຊ້ສິນຄ້າທີ່ເປັນມິດກັບສິ່ງແວດລ້ອມ ພ້ອມທັງແຍກ ແລະ ຫຼຸດຜ່ອນສິ່ງເສດເຫຼືອຈາກການບໍລິການ ໂດຍການສ້າງເປັນໂຄງການ, ກິດຈະກຳປູກຈິດສຳນຶກ ແລະ ກິດຈະກຳສາທິດໃນຮູບແບບ ສົ່ງເສີມສິນຄ້າ, ຜະລິດຕະພັນ ແລະ ການບໍລິການພາຍໃນທ້ອງຖິ່ນ;

(2) ສ້າງມາດຖານສີຂຽວ ສຳລັບ ທຸລະກິດຮ້ານອາຫານ, ເຮືອນພັກ, ໂຮງແຮມ ແລະ ແຫຼ່ງທ່ອງທ່ຽວ ທີ່ໄດ້ຮັບການຮັບຮອງວ່າເປັນມິດກັບສິ່ງແວດລ້ອມ ພ້ອມທັງສ້າງກົນໄກໃນການເຜີຍແຜ່ ເພື່ອສ້າງແຮງຈູງໃຈ ແລະ ສະໜອງຂໍ້ມູນໃຫ້ແກ່ເຈົ້າຂອງທຸລະກິດ ແລະ ຜູ້ບໍລິໂພກ;

(3) ເຊື່ອມສານແນວຄິດ ການບໍລິໂພກ ແລະ ການຜະລິດແບບຍືນຍົງເຂົ້າໃນຫຼັກສູດການສຶກສາທຸກຂັ້ນ ແລະ ໃນສື່ທຸກຮູບແບບ ແນໃສ່ຫັນປ່ຽນແນວຄິດ ແລະ ຮູບແບບການດຳລົງຊີວິດຂອງນັກຮຽນ, ນັກສຶກສາ ແລະ ສັງຄົມ.

**5.4. ອົງການຈັດຕັ້ງຫຼັກ ແລະ ອົງການຈັດຕັ້ງສະໜັບສະໜູນ:**

- ອົງການຈັດຕັ້ງຫຼັກ: ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈັດຕັ້ງປະຕິບັດກິດຈະກຳຫຼັກ: (1), (2).
- ອົງການຈັດຕັ້ງຫຼັກ: ກະຊວງສຶກສາທິການ ແລະ ກິລາ ຈັດຕັ້ງປະຕິບັດກິດຈະກຳຫຼັກ: (3).
- ອົງການຈັດຕັ້ງສະໜັບສະໜູນ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນກ່ຽວຂ້ອງອື່ນໆ.

**5.5. ຂອບເວລາ:** 2022-2025

**5.6. ແຫຼ່ງທຶນ:** ງົບປະມານລັດ, ທຶນຊ່ວຍເຫຼືອລ້າ ແລະ ອື່ນໆ.

## 6. ການຈັດຊື້-ຈັດຈ້າງສີຂຽວຂອງພາກລັດ

**6.1. ຈຸດປະສົງ:**

- ອົງການຈັດຕັ້ງລັດເປັນຜູ້ຈັດຊື້-ຈັດຈ້າງ ຫຼັກກັບບັນດາສິນຄ້າ ແລະ ບໍລິການ ທີ່ເປັນມິດກັບສິ່ງແວດລ້ອມ
- ຕອບສະໜອງໃຫ້ແກ່ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ:

  12.7-ສົ່ງເສີມການປະຕິບັດການຈັດຊື້-ຈັດຈ້າງຂອງລັດແບບຍືນຍົງ.

**6.2. ເປົ້າໝາຍ:**

ພາກສ່ວນກ່ຽວຂ້ອງກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ແຕ່ສູນກາງເຖິງທ້ອງຖິ່ນ ລວມທັງພາກເອກະຊົນ ແລະ ພາກສ່ວນອື່ນໆ.

**6.3. ກິດຈະກຳຫຼັກ:**

(1) ປະເມີນສະພາບຂອງການຈັດຊື້-ຈັດຈ້າງ ໃນ ອົງການຈັດຕັ້ງລັດ ແລະ ລັດວິສາຫະກິດ; ສ້າງແຜນງານ ແລະ ແຜນດຳເນີນງານ ການຈັດຊື້-ຈັດຈ້າງສີຂຽວຂອງພາກລັດ ແລະ ລັດວິສາຫະກິດ;

(2) ສ້າງ ແລະ ປັບປຸງ ນະໂຍບາຍ ແລະ ລະບຽບການເພື່ອສົ່ງເສີມການຈັດຊື້-ຈັດຈ້າງສີຂຽວຂອງພາກລັດ;

(3) ສ້າງ ແລະ ປັບປຸງ ບົດແນະນຳ ແລະ ຄູ່ມື ການຈັດຊື້-ຈັດຈ້າງສີຂຽວດ້ວຍທຶນຂອງລັດ;

(4) ເຜີຍແຜ່ ບົດແນະນຳ ແລະ ຄູ່ມືການຈັດຊື້-ຈັດຈ້າງສີຂຽວດ້ວຍທຶນຂອງລັດ ພ້ອມນຳພາການຈັດຕັ້ງປະຕິບັດ.

(5) ຈັດຕັ້ງປະຕິບັດ ກິດຈະກຳຕົວແບບ ການຈັດຊື້-ຈັດຈ້າງສີຂຽວດ້ວຍທຶນຂອງລັດ ພ້ອມທັງກົນໄກຕິດຕາມກວດກາ ແລະ ປະເມີນຜົນ.

**6.4. ອົງການຈັດຕັ້ງຫຼັກ ແລະ ອົງການຈັດຕັ້ງສະໜັບສະໜູນ:**

- ອົງການຈັດຕັ້ງຫຼັກ: ກະຊວງການເງິນ.
- ອົງການຈັດຕັ້ງສະໜັບສະໜູນ: ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນກ່ຽວຂ້ອງອື່ນໆ.

**6.5. ຂອບເວລາ:** 2022-2025

**6.6. ແຫຼ່ງທຶນ:** ງົບປະມານລັດ, ທຶນຊ່ວຍເຫຼືອລ້າ ແລະ ອື່ນໆ.

## 7. ສ້າງສະຫຼາກສີຂຽວຂອງ ສປປ ລາວ

**7.1. ຈຸດປະສົງ:**

- ສະຫຼາກສີຂຽວຂອງ ສປປ ລາວ ແລະ ກົນໄກກ່ຽວຂ້ອງ ເພື່ອເປັນມາດຖານໃນການຮັບຮອງຜະລິດຕະພັນ ແລະ ການບໍລິການທີ່ເປັນມິດກັບສິ່ງແວດລ້ອມຖືກສ້າງຂຶ້ນ.
- ຕອບສະໜອງໃຫ້ແກ່ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ:

  12.6-ຊຸກຍູ້ໃຫ້ບໍລິສັດປະຕິບັດການດຳເນີນທຸລະກິດ ແລະ ການລາຍງານການດຳເນີນທຸລະກິດແບບຍືນຍົງ;

  12.8-ສົ່ງເສີມຄວາມເຂົ້າໃຈທົ່ວໄປກ່ຽວກັບວິຖີຊີວິດແບບຍືນຍົງ;

  12.b-ສ້າງ ແລະ ຈັດຕັ້ງປະຕິບັດເຄື່ອງມືຕິດຕາມກວດກາການທ່ອງທ່ຽວແບບຍືນຍົງ.

**7.2. ເປົ້າໝາຍ:**

ຜະລິດຕະພັນພາຍໃນ ແລະ ຜະລິດຕະພັນນຳເຂົ້າ, ວິສາຫະກິດ, ຮ້ານອາຫານ ແລະ ໂຮງແຮມ ລວມທັງບໍລິການອື່ນໆ.

**7.3. ກິດຈະກຳຫຼັກ:**

(1) ປະເມີນສະພາບ ແລະ ທ່າແຮງຂອງຜະລິດຕະພັນພາຍໃນ ຂອງ ສປປ ລາວ ເພື່ອກຳນົດມາດຖານຂອງສະຫຼາກສີຂຽວ;

(2) ສ້າງກົນໄກ ແລະ ໜ່ວຍງານ ການຈັດຕັ້ງໃນການຮັບຮອງຜະລິດຕະພັນ ແລະ ບໍລິການສີຂຽວ;

(3) ສ້າງ ແລະ ປັບປຸງເຄື່ອງມືດ້ານນິຕິກຳ ເພື່ອຮອງຮັບການຕິດສະຫຼາກສີຂຽວໃຫ້ແກ່ຜະລິດຕະພັນພາຍໃນຂອງ ສປປ ລາວ;

(4) ຈັດຕັ້ງປະຕິບັດໂຄງການຕົວແບບໃນການຫັນວິສາຫະກິດທີ່ຜະລິດຜະລິດຕະພັນແບບເກົ່າ ມາສູ່ການຜະລິດຜະລິດຕະພັນແບບໃໝ່ທີ່ຖືກຕ້ອງຕາມເກນການຕິດສະຫຼາກສີຂຽວຂອງ ສປປ ລາວ ແລະ ກົນໄກການຕິດຕາມ, ປະເມີນຜົນ ແລະ ຖອດຖອນບົດຮຽນ ພ້ອມທັງ ເຜີຍແຜ່ຜົນສໍາເລັດຂອງໂຄງການ.

**7.4. ອົງການຈັດຕັ້ງຫຼັກ ແລະ ອົງການຈັດຕັ້ງສະໜັບສະໜູນ:**

- ອົງການຈັດຕັ້ງຫຼັກ: ກະຊວງອຸດສາຫະກໍາ ແລະ ການຄ້າ.
- ອົງການຈັດຕັ້ງສະໜັບສະໜູນ: ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ອົງການຈັດຕັ້ງຂັ້ນສູນກາງ ແລະ ທ້ອງຖິ່ນກ່ຽວຂ້ອງອື່ນໆ.

**7.5. ຂອບເວລາ:** 2022-2025

**7.6. ແຫຼ່ງທຶນ:** ງົບປະມານລັດ, ທຶນຊ່ວຍເຫຼືອລ້າ ແລະ ອື່ນໆ.

## VII. ການຈັດຕັ້ງປະຕິບັດ

1. ຈັດຕັ້ງປະຕິບັດ ກິດຈະກໍາບູລິມະສິດຂອງແຜນງານສະບັບນີ້ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX (2021-2025), ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຮອດປີ 2030 ແລະ ແຜນງານອື່ນໆທີ່ກ່ຽວຂ້ອງ.
2. ມອບໃຫ້ ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງລັດ ສັງລວມ, ເຊື່ອມສານ ການບໍລິໂພກ ແລະ ການຜະລິດແບບຍືນຍົງເຂົ້າໃນຍຸດທະສາດ, ແຜນດໍາເນີນງານ ແລະ ແຜນການກ່ຽວຂ້ອງຂອງຕົນຕາມພາລະບົດບາດ ພ້ອມທັງສົ່ງເສີມການຈັດຕັ້ງປະຕິບັດ.
3. ງົບປະມານການຈັດຕັ້ງປະຕິບັດ
   - ການຈັດສັນງົບປະມານ ສໍາລັບ ການຈັດຕັ້ງປະຕິບັດບັນດາກິດຈະກໍາພາຍໃຕ້ແຜນງານສະບັບນີ້ ແມ່ນມາຈາກ: ງົບປະມານຂອງລັດ, ການຊ່ວຍເຫຼືອເພື່ອການພັດທະນາ, ການລົງທຶນຈາກອົງການຈັດຕັ້ງພາຍໃນ ແລະ ສາກົນ ແລະ ນິຕິບຸກຄົນ ແລະ ອື່ນໆ;
   - ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງລັດຂັ້ນສູນກາງ ແລະ ທ້ອງຖິ່ນ ແມ່ນມີຄວາມຮັບຜິດຊອບໃນການຄຸ້ມຄອງງົບປະມານໃນການຈັດຕັ້ງປະຕິບັດກິດຈະກໍາພາຍໃຕ້ແຜນງານສະບັບນີ້ ຕາມພາລະບົດບາດຂອງຕົນ.

## VIII. ການຕິດຕາມກວດກາ ແລະ ການປະເມີນຜົນ

ກົມແຜນການ ແລະ ການເງິນ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃນນາມຈຸດປະສານງານແຫ່ງຊາດ ເປັນໃຈກາງໃນການປະສານສົມທົບກັບຂະແໜງການກ່ຽວຂ້ອງ ກ່ຽວກັບ ການລາຍງານ, ການແລກປ່ຽນຂໍ້ມູນ-ຂ່າວສານ, ການສ້າງຄວາມສາມາດໃນການຕິດຕາມກວດກາ ແລະ ປະເມີນຜົນແຜນງານການບໍລິໂພກ ແລະ ການຜະລິດແບບຍືນຍົງ ຂອງ ສປປ ລາວ 2022-2025, ວິໄສທັດຮອດປີ 2030 ໃນຂອບເຂດທົ່ວປະເທດ.

**ລັດຖະມົນຕີ**

ທ.ບຸນຄໍາ ວໍລະຈິດ

**LAO PEOPLE'S DROMOCRATIC REPUBLIC**
**PEACE INDEPENDENCE DEMOCRACY UNITY PROSPERITY**

Ministry of Natural Resources and Environment                    No. 2816/MoNRE
Vientiane Capital, 27 May 2022

# Sustainable Consumption and Production Roadmap of Lao PDR 2022-2025, the Vision 2030

- Pursuant the Decree on the mandates of Ministry of Natural Resources and Environment, No. 573/PO, dated 20 September 2021;
- Pursuant the notice of Deputy Prime Minister, Minister of Planning and Investment, No. 1231/MPI.IC-IO.08, dated 6 August 2020;
- Pursuant the report from Department of Planning and Finance, No.1807/MoNRE.DPF, dated 18 March 2022;

## I. BACKGROUND

The 9th National Socio-Economic Development Plan (2021-2025) and the National Green Growth Strategy to 2030 has clearly mentioned in policy to transform the development platform of Lao PDR in green and sustainable development by transforming to each sectoral planning which in Natural Resources and Environment sector, the waste management is a framework of sustainable consumption and production platform is issued in environment target 3 of the 5 years work plan 2021-2025 of the Natural Resources and Environment for Green and Sustainable Development.

Sustainable Consumption and Production or SCP is a Sustainable Development Goal number 12 aims to guarantee responsive natural resources consumption to be sustainable way and is divided into 2 parts such as: the consumption and using the natural resources in manufacturing which Ministry of Natural Resources and Environment is the National Focal Point.

As Sustainable Consumption and Production is a cross sector implementation and multi-sectional concern such as: Industry and Commerce Sector, Agriculture and Forestry Sector, Energy and Mines which concern to product manufacturing through resources consumption; Natural Resources and Environment Sector, Public Works and Transportation Sector, Education and Sport Sector, Information, Culture and Tourism Sector and related sectors is related to the waste management from production, consumption and services including information providing and awareness raising on the responsive consumption to the society and concern which recently was ununited, decentralised and duplicated. By the reasons, it is essential to develop Sustainable Consumption and Production Roadmap of Lao PDR to identify plans, priority activities and responsibilities ensuring the unity of implementation and support including systematic report, monitoring and evaluation mechanism development ensuring the sustainable consumption and production concern are systematic, particle, efficient and effective.

## II. VISION

By 2030, Lao PDR will be a country consuming eco-goods and eco-services, stably economic development by applying clean productivity technology, renewable energy,

energy efficiency, promote eco-tourism, good waste management of green and sustainable direction.

## III. VIEWPOINTS

1) Implement sustainable consumption and production, ensure the stability of socio-economic development, along with the protection of natural resources and the environment in a green and sustainable manner, and integrate sustainable consumption and production with strategies, policies and plans.

2) Implement sustainable consumption and production by using sustainable production through the promotion and application of clean and environmentally friendly technologies in production, using natural resources cost-effectively, saving energy and reducing waste and turning waste into raw materials.

3) Promote eco-tourism through green and sustainable service transformation, as well as the integration of sustainable consumption and production concepts into education at all levels and in all media aimed at transforming the thinking and way of life of society.

## IV. OBJECTIVE

Transforming consumption and production into sustainable by improving the efficiency of resource and energy use, increasing the consumption of sustainable products and services, reducing waste and promoting environmentally friendly tourism and integrating all aspects of education and all aspects of education in all dimensions.

## V. MAIN TASKS

**1) Develop and improve a policy framework for the implementation of sustainable consumption and production.**

- Integrate sustainable consumption and production into national socio-economic development plans, national green growth strategies, development strategies, operational plans, and plans at the central and local levels;
- Develop and improve strategies and mechanisms for the participation of the public and private sectors in the implementation of consumption, investment, production, distribution of environmentally friendly products and services, as well as the establishment of monitoring and evaluation mechanisms;
- Develop and improve trade policies and legislation to promote environmentally friendly products and services.

**2) Promote the production of environmentally friendly products**

- Research and review the environmentally friendly domestic products in order to classify and research the potentials, as well as promote those environmentally friendly domestic products to be able to compete with the domestic and international markets;
- Implement clean products through clean production mechanisms, save energy, study and use clean and sustainable technologies, as well as stop production that consumes energy and pollutes;
- Develop products with sustainable production models to be the main products as well as promote the development of the environmental industry;
- Establish and improve mechanisms to promote the use of clean and domestic energy-production vehicles, aimed at reduction of fossil fuel import and pollution by tax policies for eco-friendly vehicle products and parts.

**3) Waste management**

- Develop and improve policy frameworks to promote waste recycling and reuse activities, and promote integrated waste management;

- Promote waste collection based on international standards and technology;
- Implement awareness raising activities on waste separation aimed at reducing, reusing and recycling waste from households, communities, enterprises and the industrial sector;
- Advise and exchange technical information on activities to reduce, reuse and recycle waste from households and enterprises, as well as control the import of products and packaging that are harmful to the environment;
- Develop a plan to prevent and control environmental emergencies from the use of natural resources and waste management.

**4) Change consumption behaviour to a sustainable lifestyle**

- Promote and advertise sustainable livelihoods and consumption, especially in the form of waste reduction, a low-carbon society and a sustainable society;
- Develop media and advertising channels on environmentally friendly products and services to consumers, organize training and dissemination activities to provide information and awareness on sustainable consumption and production to government officials, the private sector and staff;
- Promote the role of consumer management organizations in providing information on environmentally friendly products and services to consumers;
- Prepare the green label criteria of Lao PDR and related mechanisms as a standard for the certification of environmentally friendly products and services;
- Promote the implementation of green procurement with state funding by improving various legal mechanisms so that the public sector can procure environmentally friendly goods and services;
- Promote private sector to initiate mechanism development to support the import, procurement of eco-products and services.

**5) Promote eco-tourism services and environmental education**

- Promote restaurants, hotels and tourisms places to support sustainable consumption and production by using eco-products as well as separating and reducing waste from services;
- Establish standards for restaurants and hotels that are recognized as environmentally friendly, as well as establish public relations mechanisms to create incentives and provide information to business owners and consumers;
- Integrate the concept of sustainable consumption and production into the curriculum at all levels and in all dimensions of media aimed at transforming the ideas and way of life of society.

## VI. PRIORITY ACTIVITIES

**1) Develop and improve a policy framework for the implementation of sustainable consumption and production.**

**1.1. Objective**

- ➢ Develop a policy and legislation framework to support the participation of organizations in the implementation of sustainable consumption and production;
- ➢ Response to achieving the Sustainable Development Goals:

12.1.1-Sustainable Consumption and Production Action Plan

**1.2. Object**

Regulations, standards, mechanisms and policies on sustainable consumption and production.

**1.3. Main activities**

(1) Review and introduce the integration of sustainable consumption and production into the National Socio-Economic Development Plan, the National Green Growth Strategy, the Development Strategy, the Action Plans and the Programmes at the central and local levels;

(2) Integrate sustainable consumption and production into national socio-economic development plans, national green growth strategies, development strategies, action plans and plans at the central and local levels;

(3) Establish and improve strategies and mechanisms for the participation of the public and private sectors in the implementation of consumption, production investment, distribution of environmentally friendly products and services;

(4) formulate and improve trade policies and legislation to promote environmentally friendly products and services;

(5) Establish and improve mechanisms for monitoring and evaluating the integration of sustainable consumption and production into development strategies, action plans and plans at all levels.

**1.4. Chair and Coordinative Body**

- Chair: Ministry of Natural Resources and Environment manages the implementation and Fund raising;
- Chair: Ministry of Planning and Investment implements the main activity number (1), (2), (5)
- Chair: Ministry of Industry and Commerce implements the main activity number (3), (4)
- Coordination Body: Ministry of Natural Resources and Environment, Ministry of Finance and other relevant central and local organizations.

**1.5. Implementation:** 2022-2025

**1.6. Budget:** State budget, grants, etc.

**2) Promote the production of environmentally friendly products.**

**2.1.Objective**

- Increase the quantity of eco-products in the market to meet the demand at a reasonable and competitive price;
- Response to achieving the Sustainable Development Goals:
- 12.2-Sustainable Natural Resources Management and Consumption.
- 12.4-Responsible Chemicals and Waste Management.

  12.c-Rationalize inefficient fossil-fuel subsidies that encourage wasteful consumption.

**2.2. Object**

Regulations, standards, mechanisms and policies on promoting eco-production and services is implemented.

**2.3. Main activities**

(1) Study and review domestic eco-products in order to classify and research the potential of those internal products;

(2) Establish a mechanism to promote domestic eco-products at home and abroad to be able to compete in the domestic and international markets;

(3) Study, research and implement clean products through clean production mechanisms, make efficient use of natural resources, save energy, study and apply clean and sustainable technologies, as well as stop production that consumes energy and pollutes;

(4) Implement activities, model projects to create products with sustainable production models as the core products;
(5) Establish and improve mechanisms to control the production, import of products and packaging that are harmful to the environment;
(6) Establish a mechanism to promote the development of environmental industries related to sustainable consumption and production;
(7) Establish and improve mechanisms to promote the use of clean and domestic energy-production vehicles, aimed at reduction of fossil fuel import and pollution by tax policies for eco-friendly vehicle products and parts;
(8) Develop and implement pilot project on the use of clean and domestic energy-production vehicles in public transportation, monitoring and evaluation and expand country wide;
(9) Develop pilot project to initiate mechanism supporting import, procurement eco-products and services in private sector.

**2.4. Chair and Coordinative Body**

- Chair: Ministry of Industry and Commerce implements the main activity number (1) - (6) and (9)
- Chair: Ministry of Energy and Mines implementation the main activity number (7)
- Chair: Ministry of Public Works and Transportation implements the main activity number (8)
- Coordinative Body: MoNRE, the Ministry and other relevant central and local organizations.

**2.5. Implementation:** 2022-2025

**2.6. Budget:** State budget, grants, etc.

**3) Waste Management.**

**3.1.Objective**

- Promote sustainable waste management;
- Response to achieving the Sustainable Development Goals:
  12.4- Responsible Chemicals and Waste Management
  12.5-Sustainable Waste Reduction

**3.2. Object**

Enterprises, SMEs and communities

**3.3. Main activities**

(1) Lead and create model activities and demonstrations to reduce, reuse and recycle waste in order to reduce the amount of waste in landfills and reduce the illegal open burning;
(2) Implement awareness activities on waste separation aimed at reducing, reusing and recycling waste from households, communities, enterprises and the industrial sector;
(3) Introduce and provide technical support for activities to reduce, reuse and recycle waste, as well as to create projects and activities aimed at reducing and separating waste from households and enterprises;
(4) Establish a model project or demonstration project for waste management from the industrial sector related to waste reduction, reuse and recycling of waste from other factories into raw materials of other factories;
(5) Develop and improve legislation to promote the reduction, recycling and reuse of waste activities, and promote integrated waste management;

(6) Develop a plan to prevent and control environmental emergencies from the use of natural resources and waste management by establishing demonstration projects and implementing them throughout the country.

**3.4. Chair and Coordinative Body**

- Chair: Ministry of Natural Resources and Environment implements the main activity number (1), (2), (3), (5), (6)
- Chair: Ministry of Industry and Commerce implements the main activity number (4)
- Coordinative Body: Lao National Chamber of Industry and Commerce other relevant central and local organizations

**3.5. Implementation:** 2022-2025

**3.6. Budget:** State budget, grants, etc.

**4) Change consumption behaviour to a sustainable lifestyle**

**4.1.Objective**

- Consumers understand the principles of sustainable consumption and production and transform sustainable lifestyles.
- Response to achieving the Sustainable Development Goals:
  12.5- Sustainable Waste Reduction
  12.8- Promote Sustainable Lifestyles / Education

**4.2. Object**

People, communities, enterprises

**4.3. Main activities**

(1) Promote, publicize and raise awareness on sustainable lifestyles and consumption, especially the promotion of waste reduction, low carbon society and sustainable society;

(2) Develop media and channels to advertise environmentally friendly products and services to consumers, organize training and disseminate activities to provide information and awareness on sustainable consumption and production to government officials, the private sector and staff;

(3) Establish a model project to promote and publicize the reduction of food waste from the restaurant business, waste separation and the efficient use of natural resources in the restaurant and hotel business. Establish a monitoring and evaluation mechanism as well as expand the program throughout the country;

(4) Promote the role of consumer management organizations in the mechanism of providing information on environmentally friendly products and services to consumers through the use of modern technology in the dissemination and exchange of information.

(5) Organise event to promote bicycle using to increase awareness on SCP, health promotion of people and reduce pollution from fossil fuel vehicle consumption.

**4.4. Chair and Coordinative Body**

- Chair: Ministry of Natural Resources and Environment implements the main activity number (1), (2), (3), (5)
- Chair: Ministry of Industry and Commerce implements the main activity number (4)
- Coordinative Body: Lao National Chamber of Industry and Commerce and other relevant central and local organizations

**4.5. Implementation:** 2022-2025
**4.6. Budget:** State budget, grants, etc.

5) **Promote environmentally friendly tourism services and environmental education**

**5.1.Objective**

- Restaurant, hotel business, tourism places and educational institutions turned to a collection of environmentally friendly and waste-free products.
- Response to achieving the Sustainable Development Goals:

  12.5- Sustainable Waste Reduction

  12.8-Promote Sustainable Lifestyles / Education

  12.b-Develop and implement sustainable tourism monitoring mechanism

**5.2. Object**

Restaurants, hotels and educational institutions

**5.3. Main activities**

(1) Lead and promote the restaurants, guesthouses, hotel business and tourism places to support sustainable consumption and production by using environmentally friendly products as well as separating and reducing waste from services by creating projects, awareness-raising activities and demonstration activities in the form of promotion of local products. and services;
(2) Establish green standards for the restaurant, guesthouses, hotel business and tourism places that are certified as environmentally friendly, as well as establish public relations mechanisms to create incentives and provide information to business owners and consumers;
(3) Integrate the concept of sustainable consumption and production into the curriculum at all levels and in all media in order to transform the ideas and lifestyles of students, students and society.

**5.4. Chair and Coordinative Body**

- Chair: Ministry of Information, Culture and Tourism implements the main activity number (1), (2)
- Chair: Ministry of Education and Sports implements the main activity number (3)
- Coordinative Body: Ministry of Natural Resources and Environment and other relevant central and local organizations

**5.5. Implementation:** 2022-2025
**5.6. Budget:** State budget, grants, etc.

6) **Public green procurement**

**6.1.Objective**

- Government agencies are the main procurement of environmentally friendly products and services.
- Response to achieving the Sustainable Development Goals:
  12.7-Promote Sustainable Procurement

**6.2. Object**

Central to local stakeholders involved in public procurement

**6.3. Main activities**

(1) Assess the procurement situation in government organizations and state enterprises; Develop public sector green procurement and procurement action plans;

(2) Establish and improve policies and regulations to promote green procurement of the public sector and state enterprises;
(3) Develop and update guidelines and guidelines for green procurement with state funding;
(4) Disseminate green procurement guidelines and manuals with state funding and guide implementation;
(5) Implement demonstration activities on Green Public Procurement including monitoring and evaluation.

**6.4. Chair and Coordinative Body**

- Chair: Ministry of Finance
- Coordinative Body: Ministry of Industry and Commerce, Ministry of Natural Resources and Environment and other relevant central and local organizations

**6.5. Implementation:** 2022-2025
**6.6. Budget:** State budget, grants, etc.

**7) Create a green label of Lao PDR**

**7.1.Objective**

- The green label of Lao PDR and related mechanisms to standardize the certification of environmentally friendly products and services were established.
- Response to achieving the Sustainable Development Goals:

12.6-Support companies implement sustainable business and reporting

12.8-Promote Sustainable Lifestyles / Education

12.b- Develop and implement sustainable tourism monitoring mechanism

**7.2. Object**

Domestic products, restaurants and hotels

**7.3. Main activities**

(1) Assess the condition and potential of Lao PDR's GDP to determine the criteria for the green label;
(2) Establish an organizational mechanism for the certification of green products and services;
(3) Develop and improve legislative tools to support green labelling of Lao PDR's domestic products;
(4) Implement a model project to transform enterprises that produce traditional products into traditional products in accordance with the green labelling criteria of Lao PDR, as well as publicize the success of the project.

**7.4. Chair and Coordinative Body**

- Chair: Ministry of Industry and Commerce
- Coordinative Body: Ministry of Natural Resources and Environment and other relevant central and local organizations

**7.5. Implementation:** 2022-2025
**7.6. Budget:** State budget, grants, etc.

## VII. IMPLEMENTATION

1. Implement the priority activities of this program in accordance with the Ninth National Socio-Economic Development Plan (2021-2022), the National Green Growth Strategy to 2030 and other related programs;

2. To assign ministries, ministry-equivalent organizations, and government agencies to integrate sustainable consumption and production into their strategies, operational plans, and related plans according to their roles, as well as to promote their implementation;
3. Implementation budget
   - The allocation of budget for the implementation of activities under this program comes from: the state budget, development assistance, investment from domestic and international organizations and legal entities, etc;
   - Ministries, ministry-equivalent organizations, central and local government organizations are responsible for managing the budget for the implementation of activities under this program in accordance with their respective roles.

## VIII. MONITORING AND EVALUATION

Department of Planning and Finance, Ministry of Natural Resources and Environment as National Focal Point is a main coordinator between relevant sectors on nationwide reporting, information and data sharing, capacity building on monitoring and evaluation the Sustainable Consumption and Production Roadmap of Lao PDR, Vision to 2030.

**Minister**